ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ກົມຄຸ້ມຄອງລະບົບຊໍາລະສະສາງ

ເລກທີ 1279 /ຄລຊ

ນະຄອນຫຼວງວຽງຈັນ, ວັນທີ 12 ພະຈິກ 2019

# ແຈ້ງການ

**ເຖິງ:** ບັນດາທະນາຄານທຸລະກິດທີ່ຢູ່ໃນ ສປປ ລາວ.

**ເລື່ອງ:** ການນໍາໃຊ້ເຄື່ອງພີໂອເອສ (Point of Sale: POS) ໃນການຮັບຊໍາລະຄ່າສິນຄ້າ ແລະ ຄ່າບໍລິການໃນ ສປປ ລາວ.

- ອີງຕາມກົດໝາຍວ່າດ້ວຍລະບົບການຊໍາລະ ສະບັບເລກທີ 32/ສພຊ, ລົງວັນທີ 07 ພະຈິກ 2017;
- ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ, ລົງວັນທີ 22 ທັນວາ 2014;
- ອີງຕາມແຈ້ງການຂອງ ສະບັບເລກທີ 1084/ຄລຊ, ລົງວັນທີ 09 ກັນຍາ 2019;
- ອີງຕາມບົດບັນທຶກກອງປະຊຸມ ກ່ຽວກັບການນໍາໃຊ້ເຄື່ອງພີໂອເອສ ໃນການຮັບຊໍາລະຄ່າສິນຄ້າ ແລະ ຄ່າບໍລິການໃນ ສປປ ລາວ ສະບັບລົງວັນທີ 01 ພະຈິກ 2019.

ກົມຄຸ້ມຄອງລະບົບຊໍາລະສະສາງ (ຄລຊ), ທະນາຄານແຫ່ງ ສປປ ລາວ ຂໍແຈ້ງມາຍັງບັນດາທະນາຄານທຸລະກິດທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ ຊາບ ກ່ຽວກັບການນໍາໃຊ້ເຄື່ອງພີໂອເອສ (Point of Sale: POS) ໃນການຮັບຊໍາລະຄ່າສິນຄ້າ ແລະ ຄ່າບໍລິການໃນ ສປປ ລາວ ເພື່ອໃຫ້ມີຄວາມເປັນເອກະພາບ, ສົ່ງເສີມການນໍາໃຊ້ເງິນກີບ, ຫຼຸດຜ່ອນການນໍາໃຊ້ເງິນສົດ ແລະ ຄຸ້ມຄອງການນໍາໃຊ້ເງິນຕາຕ່າງປະເທດພາຍໃນປະເທດ ຊຶ່ງມີລາຍລະອຽດດັ່ງນີ້:

1. ທະນາຄານທີ່ໃຫ້ບໍລິການຮັບຊໍາລະ (Acquirer) ສາມາດຮັບຊໍາລະເປັນສະກຸນເງິນກີບ ຫຼື ສະກຸນເງິນຕາຕ່າງປະເທດໄດ້, ແຕ່ການຈ່າຍເງິນໃຫ້ກັບຮ້ານຄ້າທີ່ຮັບຊໍາລະຕໍ່ຈາກ ທະນາຄານທີ່ໃຫ້ບໍລິການຮັບຊໍາລະ (Acquirer) ຕ້ອງເປັນສະກຸນເງິນກີບເທົ່ານັ້ນ ໂດຍໃຫ້ເລີ່ມຈັດຕັ້ງປະຕິບັດ ນັບແຕ່ວັນທີ 01 ມັງກອນ 2020 ເປັນຕົ້ນໄປ;
2. ກໍລະນີ ທະນາຄານທີ່ໃຫ້ບໍລິການຮັບຊໍາລະ (Acquirer) ບໍ່ສາມາດປະຕິບັດຕາມເນື້ອໃນ ຂໍ້ 1 ຂ້າງເທິງຂອງແຈ້ງການສະບັບນີ້ ຕ້ອງໂຈະການໃຫ້ນໍາໃຊ້ເຄື່ອງພີໂອເອສຊົ່ວຄາວ ຈົນກວ່າຈະມີຄວາມພ້ອມ, ພ້ອມທັງລາຍງານມາໃຫ້ ຄລຊ ຮັບຊາບ ຢ່າງເປັນລາຍລັກອັກສອນ;
3. ທະນາຄານທີ່ໃຫ້ບໍລິການຮັບຊໍາລະ (Acquirer) ທີ່ລະເມີດແຈ້ງການສະບັບນີ້ ຈະຖືກດໍາເນີນມາດຕະການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດດ້ວຍ.

ຫົວໜ້າກົມ

ທະນາຄານແຫ່ງ ສປປ ລາວ ກົມຄຸ້ມຄອງລະບົບຊໍາລະສະສາງ

ສຸລິສັກ ທໍາບຸວົງ